## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 05 ກຸມພາ 2023 (02-05-2023)

---

## ມັນຮຽກຮ້ອງທ່ານໃຫ້ໄວ້ວາງໃຈພຣະເຈົ້າບໍ່?

*ເມື່ອໃດທີ່ທ່ານໄດ້ກ້າວກະໂດດໂຢນໃຫຍ່ຂອງຄວາມເຊື່ອ?*

**ຈຸດສຳຄັນໃນບົດຮຽນ:** ການຫຼິງເຫັນແລະການເຊື່ອຟັງພຣະສຸຣະສຽງຂອງພຣະເຈົ້າຮຽກຮ້ອງໃຫ້ມີຄວາມເຊື່ອໃນພຣະອົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຂ້າພະເຈົ້າໄດ້ຮັບໃຊ້ໃນຕຳແໜ່ງປະທານຂອງອົງການບັບຕິສພາກໃຕ້ຂອງການາດາເປັນເວລາ 13 ປີ. ໃນປີທີ່ສອງຂອງການຮັບໃຊ້, ພຣະເຈົ້າໄດ້ຊົງຈັດຕຽມເຫດການຫຼາຍຢ່າງທີ່ນຳພວກເຮົາກ້າວໄປສູ່ຄວາມເຊື່ອອັນຍິ່ງໃຫຍ່ແລະສ້າງຕຶກອາຄານສຶກສາຫຼັງໃໝ່. ນີ້ແມ່ນໂຄງການອັນໃຫຍ່ຫຼວງທີ່ມີສິ່ງອຳນວຍຄວາມສະດວກຫຼາຍກວ່າສອງເທົ່າຂອງພວກເຮົາ. ມັນຈະມີຄ່າໃຊ້ຈ່າຍຫຼາຍກວ່າທີ່ພວກເຮົາເຄີຍຫາລາຍໄດ້ຫຼືໃຊ້ຈ່າຍໃນອະດີດທີ່ຜ່ານມາ. ພວກເຮົາບໍ່ມີເງິນສຳລັບໂຄງການນີ້, ສະນັ້ນທັງໝົດນີ້ຈະເປັນໄປໂດຍຄວາມເຊື່ອ.

ພຣະຜູ້ເປັນເຈົ້າບໍ່ໄດ້ຊົງປະທານສິ່ງທັງໝົດທີ່ພວກເຮົາຕ້ອງການໃນຕອນເລີ່ມຕົ້ນ. ກົງກັນຂ້າມ, ເມື່ອພວກເຮົາດຳເນີນແຕ່ລະຂັ້ນຕອນ, ພຣະເຈົ້າໄດ້ຊົງປະທານໃຫ້ທຶນພຽງພໍສຳລັບແຕ່ລະຂັ້ນຕອນຕໍ່ໄປຂອງການກໍ່ສ້າງອາຄານ. ໃນເວລານັ້ນ, ພວກເຮົາບໍ່ອາດສາມາດສືບຕໍ່ເຮັດວຽກໄດ້ເວັ້ນເສຍແຕ່ຈະໄດ້ຮັບເງິນທຶນເພີ່ມເຕີມ. ແຕ່ແລ້ວຕາມກຳນົດເວລາ, ເງິນກໍໄດ້ມາເຖິງພວກເຮົາຕາມທີ່ຕ້ອງການ.

ບາງຄົນສົງສັຍວ່າເປັນຫຍັງພຣະເຈົ້າຈຶ່ງບໍ່ຊົງໃຫ້ເງິນທັງໝົດທີ່ພວກເຮົາຕ້ອງການໃນຕອນແລກ ແຕ່ພວກເຮົາໄດ້ຮັບບົດຮຽນອັນລ້ຳຄ່າຈາກວິທີການນັ້ນ. ທຸກສິ່ງທຸກຢ່າງທີ່ພຣະເຈົ້າຊົງເຮັດໃນຊີວິດຂອງພວກເຮົາໄດ້ຮັບການອອກແບບມາເພື່ອເພີ່ມຄວາມເຊື່ອໃນພຣະອົງ. **<u>ພວກເຮົາຮູ້ວ່າພຣະເຈົ້າຊົງມີພຣະປະສົງຫຍັງ</u>, <u>ແລະພວກເຮົາໄວ້ວາງໃຈໃຫ້ພຣະອົງຊົງເຮັດວຽກ</u>.**

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ເຮັບເຣີ 11:1-3</u>

*[1]ອັນນຶ່ງ, ຄວາມເຊື່ອຄືຄວາມແນ່ນອນໃຈໃນສິ່ງທີ່ເຮົາຫວັງໄວ້ ເປັນຄວາມຕາຍໃຈເຖິງສິ່ງທີ່ຍັງບໍ່ເຫັນກັບຕາ. [2]ເພາະດ້ວຍຄວາມເຊື່ອ*
*ນີ້ເອງ ພວກເຖົ້າເກົ່າບູຮານໄດ້ຮັບຄຳພະຍານອັນດີ. [3]ໂດຍຄວາມເຊື່ອນີ້ເຮົາທັງຫລາຍຈຶ່ງເຂົ້າໃຈວ່າໂລກຈັກກະວານນີ້ໄດ້ຖືກສ້າງຂຶ້ນ*
*ດ້ວຍພຣະທັມຂອງພຣະເຈົ້າ ດັ່ງນັ້ນສິ່ງທີ່ຕາເຫັນຢູ່ກໍບໍ່ໄດ້ເກີດຈາກສິ່ງທີ່ປະກົດໃຫ້ເຫັນ.*

ພວກເຮົາບໍ່ສາມາດເຫັນພຣະເຈົ້າດ້ວຍສາຍຕາຝ່າຍເນື້ອໜັງ, ແຕ່ພຣະອົງຊົງເປັນພຣະກາຍ(ມີຕົວຕົນ)ຈິງແທ້ຊຶ່ງຊົງມີພຣະປະສົງທີ່ຈະມີຄວາມສາມັກຄີທັມອັນໃກ້ຊິດແລະເປັນການສ່ວນຕົວກັບພວກເຮົາ. ພຣະເຈົ້າຊົງເປັນວິນຍານແລະຊົງສະຖິດຢູ່ໂລກແຫ່ງສວັນຊຶ່ງເໜືອຄວາມເຂົ້າໃຈຂອງພວກເຮົາ. ອີກປະການນຶ່ງ, ວິທີທາງຂອງພຣະເຈົ້າແມ່ນແຕກຕ່າງແລະເໜືອກວ່າຢ່າງສິ້ນເຊີງກັບຄວາມຄິດແລະວິທີທາງຂອງພວກເຮົາ. *ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ຄວາມຄິດຂອງເຮົາບໍ່ເໝືອນຂອງພວກເຈົ້າ ທາງຂອງເຮົາແຕກຕ່າງກັບທາງຂອງເຈົ້າ. ຟ້າສວັນຢູ່ສູງກວ່າໂລກສັນໃດ, ທາງແລະແນວຄິດຂອງເຮົາກໍສູງກວ່າຂອງເຈົ້າສັນນັ້ນ* (ອຊຢ 55:8-9). ອັນນີ້ເຮັດໃຫ້ຄວາມສັມພັນຂອງພວກເຮົາກັບພຣະເຈົ້າແຕກຕ່າງຈາກຄວາມສັມພັນອື່ນໆທັງໝົດຂອງພວກເຮົາ. ດ້ວຍເຫດຂອງຄວາມຈິງເຫຼົ່ານີ້, ພວກເຮົາຈຳເປັນຕ້ອງມີຄວາມເຊື່ອຖ້າຫາກພວກເຮົາຢາກມີສາຍສັມພັນຢ່າງຖືກຕ້ອງກັບພຣະເຈົ້າ.

ຄວາມເຊື່ອແມ່ນຄວາມໝັ້ນໃຈແລະໄວ້ວາງໃຈວ່າສິ່ງໃດສິ່ງນຶ່ງທີ່ເປັນຈິງ(ມີແທ້). "*ຄວາມເຊື່ອຄືຄວາມແນ່ນອນໃຈໃນສິ່ງທີ່ເຮົາຫວັງໄວ້*" (ຂໍ້ 1). ຄວາມເຊື່ອຂອງພວກເຮົາເຮັດໃຫ້ພວກເຮົາໝັ້ນໃຈວ່າ ສິ່ງທີ່ພວກເຮົາເຊື່ອຈະກາຍເປັນຄວາມຈິງ. ເມື່ອພວກເຮົາຮູ້ຈັກພຣະລັກສນະແລະພຣະລັງອຳນາດຂອງພຣະເຈົ້າ, ແລະພວກເຮົາເຊື່ອໃນສິ່ງທີ່ພຣະອົງໄດ້ຊົງສັນຍາໄວ້, ພວກເຮົາກໍໝັ້ນໃຈໄດ້ວ່າພຣະເຈົ້າຈະຊົງກະທຳ(ເຮັດ)ຕາມທີ່ພຣະອົງໄດ້ຊົງກ່າວໄວ້.

ໃນພຣະຄັມພີ, ຄວາມເຊື່ອແມ່ນສູນກາງທີ່ພຣະເຈົ້າ (God-centered) ສເມີໄປ. **ຜູ້ຂຽນພຣະຄຳເຮັບເຣີບໍ່ໄດ້ໜຸນໃຈໃຫ້ພວກເຮົາມີຄວາມເຊື່ອໃນຕົນເອງ, ແຕ່ໃນພຣະເຈົ້າ.** ພວກເຮົາບໍ່ສາມາດເຮັດໃຫ້ຄວາມຝັນຂອງຕົນເອງກາຍເປັນຈິງສເມີໄປ, ບໍ່ວ່າພວກເຮົາຈະພະຍາຍາມເທົ່າໃດກໍຕາມ! ແຕ່ພຣະເຈົ້າຊົງສາມາດກະທຳໃຫ້ທຸກຈຸດປະສົງຂອງພຣະອົງກາຍເປັນຄວາມຈິງໃນທຸກສິ່ງໃນຊີວິດຂອງພວກເຮົາ. ເມື່ອພວກເຮົາວາງໃຈເຊື່ອໃນພຣະອົງ, ພວກເຮົາສາມາດໝັ້ນໃຈໄດ້ຢ່າງແທ້ຈິງວ່າພຣະອົງຈະຊົງກະທຳຕາມທີ່ພຣະອົງໄດ້ຊົງກ່າວໄວ້.

ເພື່ອຈະເຂົ້າໃຈພຣະຄຳຂອງພຣະເຈົ້າ, ທ່ານຕ້ອງມີຄວາມເຊື່ອ. ດ້ວຍຄວາມເຊື່ອ, ທ່ານສາມາດໄດ້ຍິນພຣະເຈົ້າໃນຂນະທີ່ທ່ານມອງເບິ່ງດວງດາວ, ເມື່ອທ່ານເຂົ້າຮ່ວມການນະມັສການ ຫຼືເມື່ອທ່ານອ່ານພຣະຄັມພີ. ຄວາມເຊື່ອເປີດຄວາມເຂົ້າໃຈຂອງທ່ານຕໍ່ສິ່ງທີ່ພຣະເຈົ້າຊົງກຳລັງກ່າວ(ເວົ້າ)ຢູ່.

## 2. ເຮັບເຣີ 11:4-6

*4 ເພາະອາເບັນມີຄວາມເຊື່ອນີ້ ຈຶ່ງໄດ້ນຳເອົາເຄື່ອງບູຊາອັນຖືກຕ້ອງກວ່າເຄື່ອງບູຊາຂອງກາອິນມາຖວາຍແດ່ພຣະເຈົ້າ ຊຶ່ງເຮັດໃຫ້ເພິ່ນ*
*ໄດ້ຮັບຄຳພະຍານວ່າເປັນຄົນຊອບທັມ ພຣະເຈົ້າກໍໄດ້ຊົງເປັນພະຍານແກ່ຂອງທານຂອງເພິ່ນ ເຖິງແມ່ນວ່າອາເບັນຕາຍແລ້ວກໍຈິງ ແຕ່*
*ເພາະມີຄວາມເຊື່ອເພິ່ນຈຶ່ງຍັງເວົ້າຢູ່. 5 ເພາະເອໂນກມີຄວາມເຊື່ອນີ້ພຣະເຈົ້າຈຶ່ງຊົງຮັບເພິ່ນຂຶ້ນໄປ ເພື່ອບໍ່ໃຫ້ເພິ່ນພົບກັບຄວາມຕາຍ*
*ແລະບໍ່ມີຜູ້ໃດພົບເຫັນເພິ່ນ ເພາະພຣະເຈົ້າຊົງຮັບເອົາເພິ່ນໄປແລ້ວ. ອັນນຶ່ງ, ກ່ອນທີ່ຊົງຮັບເອົາເພິ່ນຂຶ້ນໄປນັ້ນ ມີຜູ້ເປັນພະຍານວ່າ*
*ເພິ່ນເປັນທີ່ພໍພຣະທັຍພຣະເຈົ້າ. 6 ແຕ່ຖ້າບໍ່ມີຄວາມເຊື່ອແລ້ວ ຈະເປັນທີ່ພໍພຣະທັຍພຣະເຈົ້າບໍ່ໄດ້ ເພາະວ່າຜູ້ທີ່ມາເຝົ້າພຣະເຈົ້າໄດ້ນັ້ນ*
*ຕ້ອງເຊື່ອວ່າພຣະອົງຊົງພຣະຊົນຢູ່ ແລະພຣະອົງຊົງເປັນຜູ້ປະທານຣາງວັນໃຫ້ແກ່ທຸກຄົນທີ່ສແວງຫາພຣະອົງ.*

ພວກເຮົາໄດ້ອ່ານໃນຂໍ້ 2 ຜ່ານມາວ່າມັນແມ່ນຄວາມເຊື່ອຂອງບັນດາບັນພະບຸຣຸດຝ່າຍຈິດວິນຍານຂອງພວກເຮົາທີ່ໄດ້ຮັບການຊົງອະນຸມັດ(ເຫັນດີ)ຈາກພຣະເຈົ້າ, ແລະຂໍ້ທີ່ 4 ໄດ້ເລີ້ມສລຸບບາງບຸກຄົນຂອງຈຳນວນ "ວິຣະຊົນແຫ່ງຄວາມເຊື່ອ" ເຫຼົ່ານັ້ນ. ນີ້, ແນ່ນອນ, ບໍ່ແມ່ນບັນຊີລາຍຊື່ຄົບຖ້ວນສົມບູນ. ໜ້າສົນໃຈ, ບົດສລຸບນີ້ບໍ່ໄດ້ເລີ້ມຕົ້ນກັບອາດາມແລະເອວາ, ແຕ່ກັບລູກຊາຍທີ່ເສັຽຊີວິດຂອງພວກເຂົາຄື**ອາເບັນ**. ທັງສອງກາອິນ ແລະ ອາເບັນ ໄດ້ເອົາເຄື່ອງບູຊາມາຖວາຍໃຫ້ແກ່ພຣະເຈົ້າ (ປຖກ 4:3-5). ແນວໃດກໍ່ຕາມ, ພຣະເຈົ້າໄດ້ຊົງເຫັນຊອບຕໍ່ເຄື່ອງຖວາຍຂອງອາເບັນ ແຕ່ບໍ່ແມ່ນຂອງກາອິນ. ພຣະຄັມພີບໍ່ໄດ້ຊີ້ບອກວ່າເປັນດ້ວຍເຫດຜົນອັນໃດ. ເຄື່ອງຖວາຍຂອງກາອິນມາຈາກຜົນລະປູກຂອງແຜ່ນດິນ. ໃນຂນະທີ່ເຄື່ອງຖວາຍຂອງອາເບັນແມ່ນລູກແກະເຖິກຫົວປີຂອງຝູງແກະຂອງລາວ. ບາງຄົນຄາດຄະເນໄປວ່າຂອງຖວາຍຂອງອາເບັນໄດ້ລວມທັງການຊົດເລືອດ, ຂນະທີ່ຂອງຖວາຍຂອງກາອິນບໍ່ມີ. ເຖິງແມ່ນວ່າພາຍໃຕ້ກົດບັນຍັດຂອງໂມເຊ, ການຖວາຍພືດພັນກໍຍິນດີຖວາຍໄດ້. ພຣະຄັມພີເຮັບເຣີບອກພວກເຮົາວ່າມັນແມ່ນຄວາມເຊື່ອທີ່ເຮັດໃຫ້ຂອງຖວາຍຂອງອາເບັນເປັນທີ່ຍອມຮັບຕໍ່ພຣະເຈົ້າ. ມັນແມ່ນຍ້ອນຄວາມເຊື່ອຂອງລາວເຊັ່ນດຽວກັນທີ່ພຣະເຈົ້າຊົງຖືວ່າອາເບັນເປັນຄົນຊອບທັມ. ດ້ວຍເຫດນີ້, ແມ້ວ່າອາເບັນໄດ້ຕາຍໄປດົນນານແລ້ວ, ແຕ່ຄວາມເຊື່ອຂອງລາວຍັງສືບຕໍ່ຊຸກຍູ້ໜູນໃຈບັນດາຜູ້ທີ່ເຊື່ອໃນທຸກມື້ນີ້. ເອໂນກ ໄດ້ຖືກຈັດໃຫ້ເປັນຕົວຢ່າງອີກຜູ້ນຶ່ງຂອງຄົນທີ່ມີຄວາມເຊື່ອຊຶ່ງເຮັດໃຫ້ພຣະເຈົ້າພໍພຣະທັຍ. ເນື່ອງຈາກວ່າພຣະເຈົ້າຊົງພໍພຣະທັຍໃນເພິ່ນ, ພຣະເຈົ້າໄດ້ນຳເອົາເອໂນກໄປຢູ່ກັບພຣະອົງເອງໃນວິທີການທີ່ບໍ່ປົກກະຕິ, ໂດຍບໍ່ຈຳເປັນຕາຍກ່ອນຄື: ຂຶ້ນສວັນທັງເປັນ (ປຖກ 5:24).

ຂໍ້ 6 ເປັນນຶ່ງໃນຂໍ້ພຣະຄັມພີທີ່ສຳຄັນທີ່ສຸດກ່ຽວກັບຄວາມເຊື່ອ: "*ແຕ່ຖ້າບໍ່ມີຄວາມເຊື່ອແລ້ວ ຈະເປັນທີ່ພໍພຣະ ທັຍພຣະເຈົ້າບໍ່ໄດ້*". **ມັນເປັນໄປບໍ່ໄດ້!** ຖ້າຫາກວ່າຊີວິດຂອງທ່ານປອດພັຍທີ່ສຸດ, ຄາດຄະເນໄດ້, ແລະສະດວກສະບາຍ, ຢ່າແປກໃຈຖ້າຫາກວ່າທ່ານໄດ້ຍິນພຣະເຈົ້າເວົ້າກັບທ່ານກ່ຽວກັບບາງສິ່ງບາງຢ່າງທີ່ອາດຈະສັ່ນສະເທືອນຊີວິດຂອງທ່ານ! ຖ້າປາສຈາກຄວາມເຊື່ອແລ້ວ, ມັນເປັນໄປບໍ່ໄດ້ທີ່ຈະເຮັດໃຫ້ພຣະເຈົ້າຊົງພໍພຣະທັຍ.

ຜູ້ຄົນສ່ວນໃຫຍ່ມັກສົມມຸດເອົາວ່າການຖວາຍເງິນກ້ອນໃຫຍ່, ວຽກງານອັນໃຫຍ່ຫຼວງ, ຫຼື ການຮັບໃຊ້ພັນທະກິຈເຮັດໃຫ້ພຣະເຈົ້າພໍພຣະທັຍທີ່ສຸດ. **ແຕ່ພຣະເຈົ້າຊົງສແວງຫາຄວາມເຊື່ອ.** ຄົນສອງຄົນສາມາດເຮັດສິ່ງດຽວກັນໄດ້, ແຕ່ສຳລັບຄົນນຶ່ງ, ຕ້ອງໃຊ້ຄວາມເຊື່ອຫຼາຍກວ່າອີກຄົນນຶ່ງ. <u>ມັນແມ່ນຄວາມເຊື່ອຂອງພວກເຮົາເທົ່ານັ້ນທີ່ເຮັດໃຫ້ການຮັບໃຊ້ຂອງພວກເຮົາເປັນທີ່ພໍພຣະທັຍຕໍ່ພຣະເຈົ້າ</u>, <u>ບໍ່ແມ່ນການກະທຳທີ່ມີລາຄາສູງນັ້ນ</u>.

*ເມື່ອໃດທີ່ທ່ານໄດ້ຖືກໃຫ້ກຳລັງໃຈໂດຍຄວາມເຊື່ອຂອງຄົນອື່ນ?*

## 3. <u>ເຮັບເຣີ 11:13-16</u>

*13ສ່ວນຄົນເຫລົ່ານັ້ນ, ໄດ້ຕາຍໄປໃນຂນະທີ່ມີຄວາມເຊື່ອ ໂດຍບໍ່ໄດ້ຮັບສິ່ງທີ່ຊົງສັນຍາໄວ້ ແຕ່ເຂົາກໍໄດ້ເຫັນແລະຕ້ອນຮັບໄວ້ຕັ້ງແຕ່*
*ໄກ ແລະຍອມຕົວວ່າເຂົາເປັນພຽງແຕ່ແຂກເມືອງທີ່ທ່ອງທ່ຽວໄປມາໃນໂລກ. 14ເພາະຄົນທີ່ເວົ້າຢ່າງນີ້ ກໍສະແດງໃຫ້ເຫັນຄັກແລ້ວວ່າ*
*ເຂົາກຳລັງສແວງຫາບ້ານເມືອງຂອງຕົນ. 15ຈິງແທ້, ຖ້າເຂົາໄດ້ຄຶດເຖິງບ້ານເມືອງທີ່ເຂົາຈາກມາແລ້ວນັ້ນ ເຂົາກໍຄົງຈະມີໂອກາດກັບ*
*ຄືນໄດ້. 16ແຕ່ບັດນີ້ເຂົາປາຖນາທີ່ຈະຢູ່ໃນເມືອງອັນປະເສີດກວ່ານັ້ນ ຄືເມືອງສວັນ. ເຫດສັນນັ້ນພຣະເຈົ້າຈຶ່ງບໍ່ຊົງລະອາຍ ເມື່ອເຂົາ*
*ເອີ້ນພຣະອົງວ່າເປັນພຣະເຈົ້າຂອງເຂົາ ເພາະພຣະອົງໄດ້ຊົງຈັດແຈງນະຄອນນຶ່ງໄວ້ສຳລັບເຂົາແລ້ວ.*

**ຄວາມເຊື່ອເບິ່ງໄປໃນອະນາຄົດ:** ມັນແມ່ນການໄວ້ວາງໃຈວ່າພຣະເຈົ້າຈະຊົງເຮັດບາງສິ່ງບາງຢ່າງທີ່ຍັງບໍ່ທັນເກີດຂຶ້ນ. <u>ບາງຄັ້ງຄວາມເຊື່ອ ເຊື່ອພຣະເຈົ້າສຳລັບມື້ອື່ນ</u>. <u>ອີກບາງຄັ້ງ</u> <u>ເຊື່ອວາງໃຈພຣະເຈົ້າໃນການເຮັດບາງສິ່ງບາງຢ່າງຫຼາຍປີ</u> ຫຼື <u>ແມ້ກະທັ້ງຫຼາຍທົສວັດ(ຫຼາຍສິບປີ)ໃນອະນາຄົດຂ້າງໜ້າ</u>. ຄວາມເຊື່ອຂອງເຮົາສາມາດຖືກທົດສອບໄດ້ໂດຍການ<u>**ດົນປານໃດ**</u>ທີ່ພວກເຮົາຕຽມພ້ອມທີ່ຈະລໍຖ້າຄຳຕອບຂອງພຣະເຈົ້າ.

*ຄຳສັນຍາບາງຢ່າງຂອງພຣະເຈົ້າທີ່ທ່ານຍຶດໝັ້ນໄວ້ນັ້ນ ມີຫຍັງແດ່?*

ວິຣະຊົນແຫ່ງຄວາມເຊື່ອທີ່ລະບຸໄວ້ໃນພຣະຄັມພີເຮັບເຣີ ບົດທີ່ 11 ເຊື່ອໃນສິ່ງທີ່ພຣະເຈົ້າໄດ້ຊົງສັນຍາໄວ້. ພຣະເຈົ້າໄດ້ຊົງຮັບຮອງກັບອັບຣາຮາມແລະຊາຣາວ່າລູກຫລານຂອງເຂົາເຈົ້າຈະມີຈຳນວນຫຼວງຫຼາຍເທົ່າກັບດວງດາວໃນທ້ອງຟ້າ ແຕ່ພວກເຂົາເຈົ້າບໍ່ເຄີຍເຫັນສິ່ງນັ້ນເກີດຂຶ້ນໃນຊີວິດຂອງເຂົາເຈົ້າ. ຄຳສັນຍາບາງຢ່າງຂອງພຣະເຈົ້າໃຊ້ເວລາຫຼາຍກ່ອນທີ່ຈະບັນລຸຜົນສຳເລັດ. ເຖິງຢ່າງໃດກໍຕາມ, ບັນດາພວກທີ່ໄດ້ກ່າວເຖິງໃນ ເຮັບເຣີ 11 ໄດ້ແນ່ໃຈວ່າມື້ນຶ່ງຈະຕ້ອງເກີດຂຶ້ນ, ແລະພວກເຂົາເຈົ້າຊື່ນຊົມຍິນດີໃນພຣະເຈົ້າຄືກັນກັບວ່າມັນໄດ້ສຳເລັດແລ້ວ. ດັ່ງນັ້ນ, ພວກເຂົາເຈົ້າແນ່ນອນໃຈວ່າມັນຈະເປັນຈິງ.

ພຣະເຈົ້າໄດ້ບອກອັບຣາຮາມລາວຈະເປັນບັນພະບຸຣຸດຂອງປະເທດທັງຫຼາຍ, ແຕ່ມັນໄດ້ໃຊ້ເວລາ 25 ປີ ກ່ອນທີ່ ອີຊາກ-ບຸດຊາຍແຫ່ງພຣະສັນຍານີ້-ໄດ້ເກີດມາ. ໃນລະຍະຫຼາຍປີເຫຼົ່ານັ້ນ, ອັບຣາຮາມອາດໄດ້ເສັຽຄວາມຫວັງ ແລະໄດ້ຄຶດວ່າພຣະສັນຍາຂອງພຣະເຈົ້ານັ້ນເປັນໄປບໍ່ໄດ້. ແຕ່ແມ່ນຄວາມເຊື່ອຂອງລາວທີ່ວ່າ: ເຖິງແມ່ນວ່າໃນເວລາທີ່ພຣະສັນຍາຂອງພຣະເຈົ້າເບິ່ງຄືວ່າມະນຸດບໍ່ສາມາດບັນລຸໄດ້, ແຕ່ລາວຍັງເຊື່ອວ່າ-<u>**ສຳລັບພຣະເຈົ້າທຸກສິ່ງເປັນໄປໄດ້ສເມີ**</u>. ດ້ວຍເຫດຜົນນີ້ ພຣະເຈົ້າຈຶ່ງຊົງຖືວ່າລາວເປັນຄົນຊອບທັມ (ປຖກ 15:6). <u>ບໍ່ແມ່ນສິ່ງທີ່ອັບຣາຮາມໄດ້ເຮັດ</u>, <u>ແຕ່ແມ່ນສິ່ງທີ່ລາວ**ເຊື່ອ**ທີ່ເຮັດໃຫ້ພຣະເຈົ້າຊົງພໍພຣະທັຍ</u>.

ພວກເຮົາກຳລັງດຳເນີນຊີວິດຢູ່ໃນໂລກທີ່ບໍ່ສົມບູນແບບ. ແຕ່ພຣະເຈົ້າໄດ້ຊົງສັນຍາວ່າພຣະອົງຊົງກຳລັງກະກຽມສະຖານທີ່ດີກວ່າຫຼາຍສຳລັບບັນດາຜູ້ທີ່ເຊື່ອທີ່ຈະໄດ້ອາສັຍຢູ່ໃນມື້ໃດມື້ນຶ່ງ (ຢຮ 14:2). ເຖິງແມ່ນວ່າພວກເຮົາ ຍັງບໍ່ທັນໄດ້ປະສົບກັບທຸກສິ່ງທີ່ພຣະ

ເຈົ້າໄດ້ຊົງສັນຍາກັບພວກເຮົາ, ແຕ່ພວກເຮົາເຝົ້າເບິ່ງອະນາຄົດທີ່ພຣະເຈົ້າໄດ້ສັນຍາໄວ້, *<u>ແລະພວກເຮົາລໍຖ້າພຣະສັນຍານັ້ນດ້ວຍຄວາມໝັ້ນໃຈ</u>*, **<u>ໂດຍຮູ້ວ່າມັນເປັນສິ່ງທີ່ແນ່ນອນເພາະພຣະເຈົ້າໄດ້ຊົງກ່າວວ່າມັນຈະເປັນຢ່າງນັ້ນ!</u>**

*ການເອົາໃຈໃສ່ໃນອະນາຄົດທີ່ພຣະເຈົ້າໄດ້ສັນຍາກັບເຮົາຈະປ່ຽນວິທີການດຳເນີນຊີວິດປະຈຳວັນຂອງເຮົາແນວໃດ?*

## ນຳໃຊ້ໃນຊີວິດ:

ການເຂົ້າໃຈແລະການເຊື່ອຟັງພຣະສຸຣະສຽງຂອງພຣະເຈົ້າຮຽກຮ້ອງໃຫ້ມີຄວາມເຊື່ອໃນພຣະອົງ. ທ່ານຈະເຮັດແນວໃດເພື່ອຕອບສນອງຄວາມຈິງທີ່ວ່າ: ການເຊື່ອຟັງພຣະເຈົ້າຮຽກຮ້ອງໃຫ້ມີຄວາມເຊື່ອ? ຈົ່ງໃຊ້ນີ້ງໃນການນຳໃຊ້ດັ່ງຕໍ່ລົງໄປນີ້:

- **ຈົ່ງອະທິຖານ.** ຈົ່ງພິຈາລະນາເບິ່ງການທ້າທາຍທີ່ໃຫຍ່ທີ່ສຸດທີ່ທ່ານກຳລັງຜະເຊີນໜ້າຢູ່ໃນປະຈຸບັນ. ໃນລະດັບ 1 ຫາ 10, ທ່ານຈະໃຫ້ຄະແນນຄວາມເຊື່ອໜ້ອຍຫຼືຫຼາຍພຽງໃດ? ຈົ່ງອະທິຖານແຕ່ລະວັນ, ວາງໃຈໃນພຣະເຈົ້າໃຫ້ຊົງຊ່ວຍເຫຼືອທ່ານໃນສະຖານະການຂອງການທ້າທາຍນັ້ນ.
- **ຈົ່ງຂຽນບັນທຶກ.** ຈົ່ງຂຽນລາຍການຂໍ້ພຣະສັນຍາຂອງພຣະເຈົ້າໃນພຣະຄັມພີຫຼາຍເທົ່າທີ່ທ່ານສາມາດຈຳໄດ້. ຈົ່ງລະບຸ(ຊີ້ຕົວ/ແຍກແຍະ)ຂໍ້ພຣະສັນຍາທີ່ທ່ານອາດມີຄວາມລຳບາກທີ່ຈະເຊື່ອສຳລັບຊີວິດຂອງທ່ານເອງ. ຈົ່ງອະທິຖານທູນຂໍໃຫ້ພຣະເຈົ້າຊົງຊ່ວຍເຫຼືອທ່ານໃຫ້ເຊື່ອວາງໃຈໃນພຣະອົງແລະອ້າງເອົາຄຳສັນຍາເຫຼົ່ານັ້ນສຳລັບຊີວິດຂອງເຈົ້າ.
- **ຈົ່ງໃຫ້ກຳລັງໃຈ.** ຖ້າທ່ານຮູ້ຈັກບັນດາຄົນອື່ນໆທີ່ກຳລັງລົ້ມລຸກຄຸກຄານກັບຄວາມເຊື່ອ ຫຼືກັບນິ່ງໃນພຣະສັນຍາຂອງພຣະເຈົ້າ, ຈົ່ງໃຫ້ກຳລັງໃຈໃນຄວາມເຊື່ອຂອງພວກເຂົາເຈົ້າ. ຈົ່ງອະທິຖານເພື່ອແລະອະທິຖານຮ່ວມກັບພວກເພິ່ນ. ຈົ່ງເຕືອນພວກເພິ່ນວ່າຄວາມສັດຊື່ຂອງພຣະເຈົ້າໃນອະດີດໝາຍຄວາມວ່າພຣະອົງຊົງສາມາດໄວ້ວາງໃຈໄດ້ໃນອະນາຄົດ.

ບໍ່ວ່າທ່ານຈະລໍຖ້າໃຫ້ພຣະເຈົ້າຊົງສະເດັດມາສຳລັບໂຄງການຫຼືສຳລັບບຸກຄົນ, ຄວາມເຊື່ອເປັນສິ່ງທີ່ຈຳເປັນຕ້ອງມີ. **<u>ຂໍຂອບພຣະຄຸນພຣະເຈົ້າ, ທີ່ພວກເຮົາຮູ້ວ່າພຣະອົງຜູ້ທີ່ພວກເຮົາລໍຖ້າຢູ່ນັ້ນແມ່ນພຣະອົງຜູ້ຊົງສັດຊື່.</u>**

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ** SSK